ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 075 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2009

# ດຳລັດ

## ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ ການຊ່ວຍເຫຼືອທາງການ ເພື່ອການພັດທະນາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ (ສະບັບປັບປຸງ) ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບກັນ ໃນກອງປະຊຸມລັດຖະບານ ຄັ້ງວັນທີ 17-18 ທັນວາ 2008 ແລະ ຕາມເຫັນດີເປັນເອກະພາບໃນກອງປະຊຸມປຶກສາຫາລື ລະຫວ່າງ ກະຊວງການຕ່າງປະເທດ, ກະຊວງແຜນການແລະການລົງທຶນ ແລະ ກະຊວງການເງິນ ຄັ້ງວັນທີ 16 ກຸມພາ 2009;
- ອີງຕາມ ໃບສະເໜີ ຂອງ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0407/ຜທ.ຣມສ, ລົງວັນທີ 24 ກຸມພາ 2008 ແລະ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 23/ທປຄ, ລົງວັນທີ 24 ກຸມພາ 2009.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1.** ການຊ່ວຍເຫຼືອທາງການເພື່ອການພັດທະນາ ຊຶ່ງຕໍ່ໄປນີ້ຂຽນຫຍໍ້ວ່າ "ຊ.ກ.ພ" ປະກອບດ້ວຍ 02 ປະເພດຄື: ການຊ່ວຍເຫຼືອລ້າ ແລະ ການກູ້ຢືມໃນເງື່ອນໄຂດອກເບ້ຍຜ່ອນຜັນ ທີ່ ສ.ປ.ປ. ລາວ ໄດ້ຮັບຈາກຕ່າງປະເທດເຊັ່ນ: ລັດຖະບານ, ສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ລວມທັງກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ.

**ມາດຕາ 2.** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບເອົາ ຊ.ກ.ພ ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ ແລະ ບັນດາລະບຽບກົດໝາຍ ຂອງ ສ.ປ.ປ. ລາວ ແລະ ນຳໃຊ້ ຊ.ກ.ພ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມແຜນບຸລິມະສິດຂອງລັດຖະບານ ເພື່ອບັນລຸຈຸດໝາຍ ຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ; ເພື່ອບັນລຸຈຸດປະສົງດັ່ງກ່າວ ລັດຖະບານຈະຄຸ້ມຄອງ ແລະ ນຳໃຊ້ ຊ.ກ.ພ ບົນພື້ນຖານຫຼັກການຜ່ານປະຕູດຽວ ແນໃສ່ຮັບປະກັນປະສິດພາບ ແລະ ປະສິດທິຜົນ.

**ມາດຕາ 3.** ຊ.ກ.ພ ປະກອບດ້ວຍບັນດາຮູບການດັ່ງນີ້:

1. ການຊ່ວຍເຫຼືອລ້າ/ການກູ້ຢືມເປັນແຜນງານ;
2. ການຊ່ວຍເຫຼືອລ້າ/ການກູ້ຢືມເປັນໂຄງການ;
3. ການຊ່ວຍເຫຼືອລ້າ/ກູ້ຢືມບໍ່ເປັນໂຄງການ;
4. ການຊ່ວຍເຫຼືອລ້າດ້ານວິຊາການ;
5. ຮູບການຊ່ວຍເຫຼືອລ້າ ແລະ ກູ້ຢືມ ອື່ນໆ.

**ມາດຕາ 4.** ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຖືເອົາ ຊ.ກ.ພ ໃນຮູບແບບການຊ່ວຍເຫຼືອລ້າເປັນບຸລິມະສິດສູງສຸດ ແລະ ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການໃນຂົງເຂດເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ. ສ.ປ.ປ. ລາວ ຈະນຳໃຊ້ ຊ.ກ.ພ ໃນຮູບແບບການຊ່ວຍເຫຼືອລ້າ ແລະ ກູ້ຢືມດ້ວຍເງື່ອນໄຂດອກເບ້ຍຜ່ອນຜັນ ເຂົ້າໃນການກໍ່ສ້າງ ແລະ ຍົກລະດັບພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ການຜະລິດສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 5.** ການລະດົມທຶນ ຊ.ກ.ພ ຈະຕ້ອງອີງໃສ່ແຜນງານ, ໂຄງການບຸລິມະສິດທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ.

## ໝວດທີ II
## ສິດ ແລະ ໜ້າທີ່ ຂອງ ລັດຖະບານ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ຊ.ກ.ພ

**ມາດຕາ 6. ລັດຖະບານ ມີສິດ ແລະ ໜ້າທີ່ດັ່ງນີ້:**

6.1 ກຳນົດທິດທາງ, ຍຸດທະສາດ ແລະ ນະໂຍບາຍ ໃນການລະດົມ, ຍາດແຍ່ງ ແລະ ຄຸ້ມຄອງ ຊ.ກ.ພ;

6.2 ພິຈາລະນາ, ອະນຸມັດ, ຕົກລົງ ແລະ ຮັບຮອງເອົາ:

- ແຜນການ, ແຜນງານ ແລະ ແຜນໂຄງການ ຊ.ກ.ພ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ ບົນພື້ນຖານຄວາມເປັນເອກະພາບກັບກະຊວງການຕ່າງປະເທດ ແລະ ກະຊວງການເງິນ;

- ສັນຍາການຮ່ວມມື ແລະ ແຜນຍຸດທະສາດ ຫຼື ຂອບການຮ່ວມມື ຕາມການສະເໜີຂອງກະຊວງການຕ່າງປະເທດ ບົນພື້ນຖານຄວາມເປັນເອກະພາບກັບ ກະຊວງແຜນການແລະການລົງທຶນ ແລະ ກະຊວງການເງິນ;
- ແຜນການ, ແຜນງານ ແລະ ແຜນໂຄງການ ຊ.ກ.ພ ກັບ ສ.ສ. ຫວຽດນາມ ແລະ ສ.ປ. ຈີນ ຕາມການສະເໜີ ຂອງ ກະຊວງແຜນການ ແລະ ການລົງທຶນ ບົນພື້ນຖານຄວາມເປັນເອກະພາບກັບກະຊວງການຕ່າງປະເທດ ແລະ ກະຊວງການເງິນ;
- ຜົນການປະເມີນໂຄງການຂັ້ນສຸດທ້າຍ ຂອງໂຄງການເງິນກູ້ຢືມ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ ບົນພື້ນຖານຄວາມເປັນເອກະພາບ ກັບ ກະຊວງການຕ່າງປະເທດ ເພື່ອມອບໃຫ້ກະຊວງການເງິນເປັນໃຈກາງຈັດຕັ້ງການເຈລະຈາກັບຜູ້ໃຫ້ທຶນ;
- ຜົນການເຈລະຈາໂຄງການເງິນກູ້ຢືມ ຕາມການສະເໜີຂອງກະຊວງການເງິນ;
- ໂຄງການຊ່ວຍເຫຼືອລ້າ ທີ່ບໍ່ບັນຈຸຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ຕາມການສະເໜີຂອງກະຊວງການຕ່າງປະເທດ ບົນພື້ນຖານຄວາມເປັນເອກະພາບ ກັບ ກະຊວງແຜນການແລະການລົງທຶນ ແລະ ກະຊວງການເງິນ;
- ການເຊັນສັນຍາ, ການດັດແກ້ ຫຼື ລົບລ້າງສັນຍາ ຊ.ກ.ພ ກັບຕ່າງປະເທດ;
- ການຈັດແບ່ງ ຊ.ກ.ພ ແລະ ການຕອບສະໜອງທຶນສົມທົບຂອງລັດຖະບານ ເພື່ອປະຕິບັດແຜນງານ/ໂຄງການ ຊ.ກ.ພ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດປະຈໍາປີ.

6.3 ຊີ້ນໍາການຕິດຕາມ, ກວດກາການຈັດຕັ້ງປະຕິບັດ ແລະ ປະເມີນຜົນການນໍາໃຊ້ ຊ.ກ.ພ;

6.4 ມອບສິດໃຫ້ກະຊວງການເງິນ ຫຼື ຜູ້ທີ່ໄດ້ຮັບມອບສິດ ເປັນຜູ້ຕາງໜ້າລັດຖະບານແຫ່ງ ສ.ປ.ປ. ລາວ ເຊັນສັນຍາກູ້ຢືມກັບຕ່າງປະເທດ.

**ມາດຕາ 7. ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ດັ່ງນີ້:**

7.1 ເປັນຈຸດປະສານງານ ແລະ ຕິດຕໍ່ພົວພັນກັບຕ່າງປະເທດ ໃນການສະເໜີກ່ຽວກັບການຂໍ-ຮັບການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການຊ່ວຍເຫຼືອສຸກເສີນ ບົນພື້ນຖານຫຼັກການຜ່ານປະຕູດຽວ;

7.2 ເປັນເຈົ້າການປະສານສົມທົບ ກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຜັນຂະຫຍາຍນະໂຍບາຍ ແລະ ທິດທາງຂອງລັດຖະບານ ໃນການລະດົມທຶນ ຊ.ກ.ພ;

7.3 ເປັນເຈົ້າການປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການສ້າງ, ນໍາສະເໜີຂໍອະນຸມັດ, ດໍາເນີນການເຈລະຈາ ແລະ ເຊັນສັນຍາແມ່ ຫຼື ເອກະສານຍຸດທະສາດ ແລະ ຂອບການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ກ່ຽວກັບການຊ່ວຍເຫຼືອທາງການ ເພື່ອການພັດທະນາ ເນື້ອໃນມີລັກສະນະກວມລວມ, ພົວພັນເຖິງນະໂຍບາຍດ້ານການເມືອງ, ເສດຖະກິດ ແລະ ສັງຄົມ;

7.4 ເປັນເຈົ້າການສ້າງຍຸດທະສາດ, ແຜນການ, ແຜນງານ, ແຜນໂຄງການຮ່ວມມືຊ່ວຍເຫຼືອ ກັບອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ, ລວມທັງສະມາຄົມ, ກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ ແລະ ພິຈາລະນາ ອະນຸມັດ, ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການລະອຽດບົນພື້ນຖານການປະສານສົມທົບ ແລະ ການສະເໜີຂອງກະຊວງ, ຂະແໜງການ, ອົງການ ແລະ ທ້ອງຖິ່ນ;

7.5 ແຈ້ງໃຫ້ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ, ລວມທັງສະມາຄົມ, ກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ ກ່ຽວກັບການອະນຸມັດຮັບເອົາໂຄງການ ຊ.ກ.ພ;

7.6 ອອກໃບມອບສິດໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຊັນສັນຍາໂຄງການ ຊ.ກ.ພ ລະອຽດ;

7.7 ເຂົ້າຮ່ວມການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ປະຈຳງວດ, ປະຈຳ 06 ເດືອນ ແລະ ປະຈຳປີ ນຳກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງອົງການຜູ້ໃຫ້ທຶນ;

7.8 ສົມທົບກັບ ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງ ແລະ ເຂົ້າຮ່ວມການຝຶກອົບຮົມທາງດ້ານວິຊາການຕ່າງໆ ກ່ຽວກັບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ;

7.9 ສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສະເໜີການຍ້ອງຍໍເຈົ້າໜ້າທີ່ ຂອງ ສະຖານທູດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ລວມທັງສະມາຄົມ, ກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫຼືອ ສ.ປ.ປ. ລາວ;

7.10 ປະສານສົມທົບກັບກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ ແລະ ສະຫຼຸບສັງລວມຜົນຂອງການຈັດຕັ້ງປະຕິບັດແຜນງານ/ໂຄງການຮ່ວມມື ກັບອົງການຈັດຕັ້ງສາກົນທີ່ບໍ່ ສັງກັດລັດຖະບານ ລວມທັງສະມາຄົມ, ກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ ເພື່ອລາຍງານໃຫ້ລັດຖະບານຊາບ ໃນແຕ່ລະໄລຍະ.

**ມາດຕາ 8. ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ດັ່ງນີ້:**

8.1 ສ້າງແຜນຄວາມຕ້ອງການທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ ໂດຍແນໃສ່ຕອບສະໜອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

8.2 ເປັນເຈົ້າການປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງຜັນຂະຫຍາຍນະໂຍບາຍ ແລະ ທິດທາງຂອງລັດຖະບານ ໃນການລະດົມທຶນ ຊ.ກ.ພ;

8.3 ບົນພື້ນຖານ ສັນຍາການຮ່ວມມື ແລະ ເອກະສານຍຸດທະສາດ ຫຼື ຂອບການຮ່ວມມື ທີ່ລັດຖະບານໄດ້ອະນຸມັດ ແລະ ກະຊວງການຕ່າງປະເທດໄດ້ເຊັນກັບຕ່າງປະເທດແລ້ວ, ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງກະກຽມ, ສ້າງ ແລະ ສັງລວມ

ບັນດາແຜນການ, ແຜນງານ ແລະ ແຜນໂຄງການ ແລ້ວນຳສະເໜີລັດຖະບານອະນຸມັດ ເພື່ອດຳເນີນການລະດົມຂົນຂວາຍ ໂດຍຜ່ານກົນໄກໂຕະມົນ;

8.4 ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງບັນດາອົງການຈັດຕັ້ງປະຕິບັດຂອງຜູ້ໃຫ້ທຶນ ກະກຽມ, ສ້າງເອກະສານໂຄງການຊ່ວຍເຫຼືອລ້າລະອຽດ, ນຳສະເໜີລັດຖະບານອະນຸມັດ ແລະ ແຈ້ງການໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ເປັນເຈົ້າຂອງໂຄງການດຳເນີນການເຈລະຈາ ແລະ ເຊັນສັນຍາຈັດຕັ້ງປະຕິບັດ;

8.5 ປະສານສົມທົບກັບກະຊວງການເງິນ ແລະ ກະຊວງການຕ່າງປະເທດ ເພື່ອທົບທວນ ແລະ ຢັ້ງຢືນຄືນໃນແຕ່ລະປີ ກ່ຽວກັບການກູ້ຢືມ ແລ້ວແຈ້ງໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຊາບ;

8.6 ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງການຕ່າງປະເທດ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ກະກຽມໂຄງການເງິນກູ້ຢືມຕາມຂັ້ນຕອນ ນັບຕັ້ງແຕ່ການກະກຽມຂໍ້ມູນເບື້ອງຕົ້ນ ຈົນຮອດການປະເມີນໂຄງການຂັ້ນສຸດທ້າຍ ແລ້ວນຳສະເໜີ ເພື່ອຂໍອະນຸມັດຈາກລັດຖະບານ;

8.7 ເປັນເຈົ້າການສ້າງ ແລະ ນຳໃຊ້ລະບົບການຕິດຕາມ ແລະ ປະເມີນຜົນໂຄງການ ຊ.ກ.ພ;

8.8 ເປັນເຈົ້າການໃນການປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການດຳເນີນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ຊ.ກ.ພ, ລວມທັງ ເກັບກຳຂໍ້ມູນ, ສະຫຼຸບສັງລວມຜົນຂອງການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ແລະ ດຳເນີນກອງປະຊຸມປະຈຳໄຕມາດ, ປະຈຳ 06 ເດືອນ, ປະຈຳປີກັບອົງການຈັດຕັ້ງປະຕິບັດຂອງຜູ້ໃຫ້ທຶນ ເພື່ອລາຍງານໃຫ້ລັດຖະບານຊາບ;

8.9 ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຈັດການຝຶກອົບຮົມທາງດ້ານວິຊາການຕ່າງໆ ໃຫ້ພະນັກງານທີ່ຄຸ້ມຄອງ ແລະ ປະຕິບັດແຜນງານ/ໂຄງການ ຊ.ກ.ພ;

8.10 ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສັງລວມແຜນການສະໜອງທຶນສົມທົບພາຍໃນ ເພື່ອຈັດແບ່ງເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີ ໃຫ້ແກ່ແຜນງານ/ໂຄງການ ຊ.ກ.ພ ໂດຍສອດຄ່ອງກັບພັນທະທີ່ມີ ຕາມສັນຍາກັບຕ່າງປະເທດ;

8.11 ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ສະເໜີການຍ້ອງຍໍຊ່ຽວຊານ/ອາສາສະໝັກ ຂອງ ອົງການຈັດຕັ້ງສາກົນ, ຜູ້ໃຫ້ທຶນທີ່ມາປະຕິບັດໜ້າທີ່ ຕາມແຜນງານ/ໂຄງການ ຊ.ກ.ພ. ໃນ ສ.ປ.ປ. ລາວ.

**ມາດຕາ 9. ກະຊວງການເງິນ ມີສິດ ແລະ ໜ້າທີ່ດັ່ງນີ້:**

9.1 ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການກະກຽມແຜນງານ/ໂຄງການກູ້ຢືມຈາກຜູ້ໃຫ້ທຶນ ແລະ ສະຖາບັນການເງິນສາກົນ;

9.2 ບົນພື້ນຖານການອະນຸມັດເອກະສານປະເມີນໂຄງການຂັ້ນສຸດທ້າຍ ແລະ ການມອບສິດ ຂອງລັດຖະບານ, ແຕ່ງຕັ້ງຄະນະເຈລະຈາ ແລະ ດຳເນີນການເຈລະຈາໂຄງການເງິນກູ້ຢືມດັ່ງກ່າວ ແລ້ວລາຍງານຜົນການເຈລະຈາໃຫ້ລັດຖະບານ ເພື່ອຮັບຮອງເອົາ;

9.3 ເປັນເຈົ້າການກະກຽມເນື້ອໃນຮ່າງສັນຍາເງິນກູ້ຢືມ (ພາຍຫຼັງເອກະສານແຜນງານ/ໂຄງການຂັ້ນສຸດທ້າຍໄດ້ຮັບອະນຸມັດ) ໂດຍສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

9.4 ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນຂັ້ນຕອນອອກຄວາມເຫັນທາງດ້ານກົດໝາຍ ແນໃສ່ເພື່ອເຮັດໃຫ້ສັນຍາເງິນກູ້ຢືມ ມີຜົນສັກສິດນຳໃຊ້ໄດ້;

9.5 ເປັນເຈົ້າການດຳເນີນຂັ້ນຕອນການຄ່ຽນເງິນ ຈາກບັນຊີຂອງຜູ້ໃຫ້ທຶນ ແລະ ຄຸ້ມຄອງການຖືບັນຊີເງິນຂອງແຜນງານ/ໂຄງການ ຊ.ກ.ພ;

9.6 ເປັນເຈົ້າການ ປະສານສົມທົບກັບຜູ້ໃຫ້ທຶນ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຝຶກອົບຮົມ ກ່ຽວກັບລະບຽບການເບີກຈ່າຍທຶນ ຊ.ກ.ພ, ການຄຸ້ມຄອງການເງິນ, ການຈັດຊື້ ແລະ ການຈັດຈ້າງຊ່ຽວຊານ;

9.7 ປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາ ແລະ ຕີລາຄາຜົນຂອງການຈັດຕັ້ງປະຕິບັດໂຄງການເງິນກູ້ຢືມ ໃນແຕ່ລະໄລຍະ;

9.8 ປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຕິດຕາມການນຳໃຊ້ຊັບສົມບັດຂອງໂຄງການທີ່ນຳໃຊ້ທຶນ ຊ.ກ.ພ;

9.9 ເປັນເຈົ້າການ ໃນການຄົ້ນຄວ້າເງື່ອນໄຂສັນຍາໃຫ້ກູ້ຢືມຕໍ່ ໃຫ້ແກ່ລັດວິສາຫະກິດ ແລະ ຫົວໜ່ວຍເສດຖະກິດອື່ນໆ;

9.10 ເປັນເຈົ້າການໃນການຕິດຕາມ ແລະ ສັງລວມການເຄື່ອນໄຫວທາງດ້ານການເງິນ ຂອງ ວິສາຫະກິດທີ່ນຳໃຊ້ທຶນ ຊ.ກ.ພ;

9.11 ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ ແລະ ສະຫຼຸບສັງລວມຜົນການຈັດຕັ້ງປະຕິບັດ ແຜນງານ/ໂຄງການ ຊ.ກ.ພ ເພື່ອລາຍງານລັດຖະບານ.

**ມາດຕາ 10. ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ດັ່ງນີ້:**

10.1 ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເຂົ້າຮ່ວມໃນການກະກຽມ ແລະ ເຈລະຈາແຜນງານ/ໂຄງການກູ້ຢືມ;

10.2 ເປັນເຈົ້າການພິຈາລະນາ ແລະ ໃຫ້ຄວາມເຫັນທາງດ້ານກົດໝາຍ ຕໍ່ ເນື້ອໃນສັນຍາແຜນງານ/ໂຄງການກູ້ຢືມ ໃນກໍລະນີທີ່ມີຄວາມຈຳເປັນ ຕ້ອງນຳສະເໜີສະພາແຫ່ງຊາດ ເພື່ອພິຈາລະນາອອກຄວາມເຫັນທາງດ້ານກົດໝາຍ.

**ມາດຕາ 11. ກະຊວງ ແລະ ອົງການອື່ນໆ ມີສິດ ແລະ ໜ້າທີ່ດັ່ງນີ້:**

11.1 ສ້າງແຜນງານ/ໂຄງການ ຊ.ກ.ພ ລະອຽດ ທີ່ກ່ຽວຂ້ອງກັບແຜນຍຸດທະສາດຂອງຂະແໜງການຕົນ; ດຳເນີນການເຈລະຈາ ແລະ ເຊັນສັນຍາ ເພື່ອຈັດຕັ້ງປະຕິບັດໂຄງການສະເພາະກັບຜູ້ ໃຫ້ທຶນຕາມການຕົກລົງເຫັນດີ ຂອງ ກະຊວງແຜນການ ແລະ ການລົງທຶນ;

11.2 ຮ່ວມກັບ ກະຊວງການຕ່າງປະເທດ, ກະຊວງແຜນການແລະການລົງທຶນ ແລະ ກະຊວງການເງິນ ເພື່ອກຳນົດຍຸດທະສາດ, ຂອບການຮ່ວມມື ແລະ ແຜນການຮ່ວມມືກັບຕ່າງປະເທດ ໃນແຕ່ລະໄລຍະ ລວມທັງການລະດົມທຶນ ຊ.ກ.ພ ໂດຍຕິດພັນກັບຍຸດທະສາດຂອງຂະແໜງການຕົນ;

11.3 ຈັດລຽງບຸລິມະສິດແຜນທຶນສົມທົບພາຍໃນ ໃຫ້ແກ່ແຜນງານ/ໂຄງການ ຊ.ກ.ພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນເອງ ຕາມສັນຍາທີ່ເຊັນກັບຕ່າງປະເທດ ແລ້ວສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດເຂົ້າແຜນການງົບປະມານພາຍໃນແຕ່ລະປີ;

11.4 ແຕ່ງຕັ້ງຄະນະຊີ້ນຳ ແລະ ໜ່ວຍງານຄຸ້ມຄອງແຜນງານ/ໂຄງການ ຊ.ກ.ພ ໃນແຕ່ລະຂັ້ນ ຕາມທີ່ໄດ້ລະບຸໄວ້ໃນເອກະສານແຜນງານ/ໂຄງການ ແລະ ສັນຍາກັບຜູ້ໃຫ້ທຶນ;

11.5 ສະຫຼຸບລາຍງານການເບີກຈ່າຍ ລວມທັງຕີລາຄາຜົນຄວາມຄືບໜ້າ ຂອງ ການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ ແລະ ປະຈຳປີໃຫ້ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ;

11.6 ສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ສະເໜີຍ້ອງຍໍບັນດາຊ່ຽວຊານ/ອາສາສະໝັກຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ຕາມແຜນງານ/ໂຄງການ ຊ.ກ.ພ ທີ່ມີຜົນງານ ດີເດັ່ນໃນການປະກອບສ່ວນຊ່ວຍເຫຼືອ ສ.ປ.ປ. ລາວ;

11.7 ສະເໜີກະຊວງແຜນການ ແລະ ການລົງທຶນ ກ່ຽວກັບແຜນການນຳເຂົ້າວັດຖຸ-ອຸປະກອນ ແລະ ພາຫະນະ ເພື່ອຮັບໃຊ້ແຜນງານ/ໂຄງການ ຊ.ກ.ພ;

11.8 ດຳເນີນການທາບທາມ ການຊ່ວຍເຫຼືອ ແລະ ການກູ້ຢືມ ຈາກຜູ້ໃຫ້ທຶນ ຊ.ກ.ພ ເພື່ອຮັບໃຊ້ໃຫ້ຍຸດທະສາດພັດທະນາຂອງຂະແໜງການຕົນເອງ ແລ້ວນຳສະເໜີກະຊວງແຜນການ ແລະ ການລົງທຶນ.

**ມາດຕາ12. ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:**

12.1 ສ້າງແຜນງານ/ໂຄງການ ຊ.ກ.ພ ລະອຽດ ທີ່ກ່ຽວຂ້ອງກັບແຜນຍຸດທະສາດຂອງຂະແໜງການຂອງຕົນ; ດຳເນີນການເຈລະຈາ ແລະ ເຊັນສັນຍາ ເພື່ອຈັດຕັ້ງປະຕິບັດໂຄງການສະເພາະກັບຜູ້ໃຫ້ທຶນ ຕາມການຕົກລົງເຫັນດີ ຂອງ ກະຊວງແຜນການ ແລະ ການລົງທຶນ;

12.2 ຮ່ວມກັບກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການ ເງິນ ເພື່ອກຳນົດຍຸດທະສາດ, ຂອບການຮ່ວມມື ແລະ ແຜນການຮ່ວມມື ກັບຕ່າງປະເທດໃນແຕ່ລະໄລຍະ ລວມທັງການລະດົມທຶນ ຊ.ກ.ພ ໂດຍຕິດພັນກັບຍຸດທະສາດຂອງທ້ອງຖິ່ນຕົນ;

12.3 ຈັດລຽງບຸລິມະສິດ ແຜນທຶນສົມທົບພາຍໃນ ໃຫ້ແກ່ແຜນງານ/ໂຄງການ ຊ.ກ.ພ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນເອງ ຕາມສັນຍາທີ່ເຊັນກັບຕ່າງປະເທດ ແລ້ວສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດເຂົ້າແຜນການງົບປະມານພາຍໃນແຕ່ລະປີ;

12.4 ແຕ່ງຕັ້ງຄະນະຊີ້ນຳ ແລະ ໜ່ວຍງານຄຸ້ມຄອງແຜນງານ/ໂຄງການ ຊ.ກ.ພ ໃນແຕ່ລະຂັ້ນຕາມທີ່ໄດ້ລະບຸໄວ້ ໃນເອກະສານແຜນງານ/ໂຄງການ ແລະ ສັນຍາກັບຜູ້ໃຫ້ທຶນ;

12.5 ສະຫຼຸບລາຍງານການເບີກຈ່າຍ ລວມທັງຕີລາຄາຜົນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 06 ເດືອນ ແລະ ປະຈຳປີໃຫ້ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ;

12.6 ສົມທົບກັບກະຊວງ, ອົງການອື່ນໆ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ສະເໜີຍ້ອງຍໍບັນດາຊ່ຽວຊານ/ອາສາສະໝັກຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ຕາມແຜນງານ/ໂຄງການ ຊ.ກ.ພ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫຼືອ ສ.ປ.ປ. ລາວ;

12.7 ສະເໜີກະຊວງແຜນການ ແລະ ການລົງທຶນ ກ່ຽວກັບແຜນການນໍາເຂົ້າວັດຖຸ-ອຸປະກອນ ແລະ ພາຫະນະ ເພື່ອຮັບໃຊ້ແຜນງານ/ໂຄງການ ຊ.ກ.ພ;

12.8 ດໍາເນີນການທາບທາມ ການຊ່ວຍເຫຼືອ ແລະ ການກູ້ຢືມ ຈາກຜູ້ໃຫ້ທຶນ ຊ.ກ.ພ ເພື່ອຮັບໃຊ້ໃຫ້ຍຸດທະສາດພັດທະນາຂອງທ້ອງຖິ່ນຕົນເອງ ແລ້ວນໍາສະເໜີກະຊວງແຜນການ ແລະ ການລົງທຶນ.

## ໝວດທີ III
## ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ທີ່ນໍາໃຊ້ທຶນ ຊ.ກ.ພ

**ມາດຕາ 13.** ການຄຸ້ມຄອງ ແລະ ນໍາໃຊ້ທຶນ ຊ.ກ.ພ ເຂົ້າໃນໂຄງການຕ່າງໆ ຕ້ອງສອດຄ່ອງກັບດໍາລັດສະບັບນີ້ ແລະ ລະບຽບຫຼັກການການເງິນຂອງ ສ.ປ.ປ. ລາວ.

**ມາດຕາ 14.** ໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ/ໂຄງການ ເປັນຜູ້ຮັບຜິດຊອບຄຸ້ມຄອງໂດຍກົງ ໃນການຈັດຕັ້ງປະຕິບັດຕົວຈິງ. ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ, ກະຊວງການເງິນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ມີໜ້າທີ່ຕິດຕາມ, ກວດກາ, ຊຸກຍູ້ໃຫ້ຄໍາແນະນໍາ ແລະ ອໍານວຍຄວາມສະດວກ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນງານ/ໂຄງການ ຊ.ກ.ພ ບັນລຸຜົນສໍາເລັດ ແລະ ມີປະສິດທິຜົນສູງ.

**ມາດຕາ 15. ການສິ້ນສຸດໂຄງການ**

15.1 ກ່ອນໂຄງການຈະສິ້ນສຸດລົງ 03 ເດືອນ, ກະຊວງ, ອົງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ເປັນເຈົ້າຂອງແຜນງານ/ໂຄງການ ຕ້ອງລາຍງານກ່ຽວກັບການສະຫຼຸບຕີລາຄາຜົນຂອງການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາ ລວມທັງລາຍງານບັນຊີຊັບສົມບັດຂອງແຜນງານ/ໂຄງການ ໃຫ້ກະຊວງແຜນການແລະການລົງທຶນ, ກະຊວງການຕ່າງປະເທດ ແລະ ກະຊວງການເງິນ;

15.2 ກະຊວງແຜນການ ແລະ ການລົງທຶນ, ກະຊວງການຕ່າງປະເທດ ແລະ ກະຊວງການເງິນ ຈັດກອງປະຊຸມພິຈາລະນາ ບົດລາຍງານດັ່ງກ່າວ ເພື່ອມີທິດຊີ້ນໍາທີ່ເປັນເອກະພາບ ຕໍ່ບົດສະຫຼຸບຕີລາຄາ. ຫຼັງຈາກນັ້ນ, ໃຫ້ຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ ແລະ ຜູ້ໃຫ້ທຶນ;

15.3 ພາຍຫຼັງແຜນງານ/ໂຄງການສິ້ນສຸດລົງ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນທີ່ເປັນເຈົ້າຂອງແຜນງານ/ໂຄງການ ຕ້ອງໄດ້ສະຫຼຸບ, ມອບຊັບສົມບັດຂອງແຜນງານ/ໂຄງການ ໃຫ້ແກ່ກະຊວງການເງິນ ເພື່ອຄຸ້ມຄອງ ແລະ ສະເໜີແຜນແຈກຢາຍຄືນໃໝ່ໃຫ້ລັດຖະບານຮັບຮອງ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 16.** ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ອອກບົດແນະນຳລະອຽດ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້; ກະຊວງການຕ່າງປະເທດ ເປັນຜູ້ອອກບົດແນະນຳລະອຽດ ໃນການຄຸ້ມຄອງ ແລະ ນຳໃຊ້ທຶນຈາກອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ລວມທັງກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ; ກະຊວງການເງິນ ເປັນຜູ້ອອກລະບຽບການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທຶນກູ້ຢືມຂອງແຜນງານ/ໂຄງການ ຊ.ກ.ພ.

**ມາດຕາ 17.** ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18.** ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ **168/ນຍ**, ລົງວັນທີ **22** ພະຈິກ **2004** ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

**ບົວສອນ ບຸບຜາວັນ**